# ກອງປະຊຸມທຸລະກິດ ຄັ້ງທີ 14

## ຕາຕະລາງ ຂໍ້ສະເໜີ ທີ່ມີຄວາມຄືບໜ້າໃນການແກ້ໄຂ
## (ປັບປຸງໃນວັນທີ 22 ມີນາ 2023)

2023

# ຕາຕະລາງ ຂໍ້ສະເໜີ ທີ່ມີຄວາມຄືບໜ້າໃນການແກ້ໄຂ (ປັບປຸງໃນວັນທີ 22 ມີນາ 2023)

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 1 | ກະຊວງອຸດສາຫະກຳ ແລະ ການຄ້າ | ສະເໜີໃຫ້ລັດຖະບານ (ຫສນຍ) ອອກແຈ້ງການ ຮັບຮອງເອົາ 6 ຂະແໜງ ຄື: ອຸດສາຫະກຳປຸງແຕ່ງ, ອຸດສາຫະກຳປຸງແຕ່ງ ກະສິກຳ ແລະ ປ່າໄມ້, ທ່ອງທ່ຽວ, ຮ້ານອາຫານ, ກໍ່ສ້າງ, ແລະ ສຶກສາ ເພື່ອປັບປຸງຂັ້ນຕອນການອອກອະນຸຍາດດຳເນີນທຸລະກິດ (ກຳນົດໃຫ້ເປັນ Priority licenses ໃນການປັບປຸງ) ໂດຍສະເໜີໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ປະສານຕິດຕາມກັບ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອອອກແຈ້ງການດັ່ງກ່າວ. | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ14 ຄັ້ງວັນທີ 21 ມີນາ 2023: ກະຊວງອຸດສາຫະກຳ ແລະ ການຄ້າ ພວມຢູ່ໃນຂັ້ນຕອນຍົກລະດັບຫົວໜ້າຄະນະໜ່ວຍງານປັບປຸງການອອກອະນຸຍາດດຳເນີນທຸລະກິດ ຈາກລະດັບຫົວໜ້າກົມໄປເປັນຮອງລັດຖະມົນຕີ ແລະ ໄດ້ຮັບເອົາຂໍ້ສະເໜີນີ້. |
| 2 | ກະຊວງອຸດສາຫະກຳ ແລະ ການຄ້າ | ສະເໜີໃຫ້ລັດຖະບານດຳເນີນການປັບປຸງການອອກອະນຸຍາດດຳເນີນທຸລະກິດ ຂອງ 6 ຂະແໜງການບູລິມະສິດ ໃຫ້ສຳເລັດ ພາຍໃນ 18 ເດືອນ ພ້ອມທັງ ພິຈາລະນາຫັນໄປນຳໃຊ້ລະບົບການພິຈາລະນາອີງໃສ່ ຄວາມສ່ຽງ ເປັນຫຼັກ (ເຊັ່ນ ສຳລັບກິດຈະກຳທີ່ມີຄວາມສ່ຽງຕ່ຳ ແມ່ນບໍ່ຈຳເປັນຕ້ອງຂໍອະນຸຍາດດຳເນີນທຸລະກິດ). | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ14 ຄັ້ງວັນທີ 21 ມີນາ 2023:<br>• ກະຊວງອຸດສາຫະກຳ ແລະ ການຄ້າ ເຫັນດີ ປັບປຸງ 5 ໃບອະນຸຍາດຄື: ທຸລະກິດອຸດສາຫະກຳປຸງແຕ່ງທີ່ຕິດພັນກັບຂະແໜງອຸດສາຫະກຳ ແລະ ການຄ້າ, ທ່ອງທ່ຽວ, ຮ້ານອາຫານ, ກໍ່ສ້າງ, ແລະ ສຶກສາ, ໃຫ້ສຳເລັດພາຍໃນ 18 ເດືອນ.<br>• ສຳລັບໃບອະນຸຍາດດຳເນີນທຸລະກິດ ທີ່ອອກໂດຍ ກະຊວງກະສິກຳ ແລະ ປ່າໄມ້ ຈະມີການປຶກສາຫາລືເພີ່ມເຕີມ ເພື່ອກຳນົດຄາດໝາຍສຳເລັດຂອງການປັບປຸງ.<br>• ຜ່ານມາໄດ້ມີຄວາມຄືບໜ້າຫຼາຍຢ່າງ ໃນການປັບປຸງໃບອະນຸຍາດການດຳເນີນທຸລະກິດຂອງຂະແໜງອຸດສາຫະກຳປຸງແຕ່ງທີ່ຕິດພັນກັບຂະແໜງ ອຸດສາຫະກຳ ແລະ ການຄ້າ ,ທ່ອງທ່ຽວ, ຮ້ານອາຫານ, ກໍ່ສ້າງ, ແລະ ສຶກສາ. ສຳລັບໃບອະນຸຍາດດຳເນີນທຸລະກິດທີ່ຕິດພັນກັບອຸດສາຫະກຳປຸງແຕ່ງກະສິກຳ ແລະ ປ່າໄມ້ ແມ່ນຈະຮ່ວມເຮັດວຽກ ແລະ ລົງເລິກປະເດັນທີ່ຍັງເປັນບັນຫາຕື່ມ. |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 3 | 1. ກະຊວງໂຍທາທິການ ແລະ ຂົນສົ່ງ<br>2. ກະຊວງອຸດສາຫະກຳ ແລະ ການຄ້າ | • ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາຄືນ ຕໍ່ກັບ ແຈ້ງການ ເລກທີ 04718/ຍທຂ.ທກ, ລົງວັນທີ 23 ກຸມພາ 2022, ໂດຍສະເພາະ ແມ່ນ ພິຈາລະນາ ໃຫ້ລົດຂົນສົ່ງຕ່າງປະເທດ ສາມາດເຂົ້າມາສົ່ງສິນຄ້າ ຢູ່ ສປປ ລາວ ແລະ ສາມາດນຳເອົາຕູ້ຂົນສົ່ງເປົ່າ ມາຮັບເອົາສິນຄ້າ ທີ່ຈະສົ່ງອອກຈາກ ສປປ ລາວ ທີ່ຈຸດສົ່ງ-ມອບສິນຄ້າ ໄດ້ໂດຍທີ່ບໍ່ຕ້ອງມີການຄ່ຽນຖ່າຍສັບປ່ຽນຫົວລາກເປັນລົດລາວ ເພື່ອເປັນ ການສົ່ງເສີມການຜະລິດສິນຄ້າເພື່ອສົ່ງອອກ<br>• ສະເໜີກະຊວງອຸດສາຫະກຳ ແລະ ການຄ້າ ໃນນາມຜູ້ປະຈຳການຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ ພິຈາລະນາ ເປັນເຈົ້າການປະສານສົມທົບກັບທຸກພາກສ່ວນກ່ຽວຂ້ອງ ເພື່ອປະເມີນຄືນ ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດ ແຈ້ງການ ເລກທີ 04718/ຍທຂ.ທກ, ແລະ ຄົ້ນຄວ້າທາງອອກ ທີ່ສ້າງສັນ ແລະ ເປັນຜົນດີແກ່ທຸກຝ່າຍ, ພ້ອມທັງຕິດຕາມການຈັດຕັ້ງປະຕິບັດ ບັນດາທາງອອກດັ່ງກ່າວ.<br>• ເຖິງວ່າຜ່ານມາໄດ້ມີການແກ້ໄຂແລ້ວບາງສ່ວນ ແຕ່ວິທີການແກ້ໄຂຍັງບໍ່ສ້າງຄວາມສະ ເໝີພາບ ແລະ ຄວາມຊັດເຈນໃຫ້ແກ່ການຈັດຕັ້ງປະຕິບັດ (ໄດ້ມີການແກ້ໄຂດ້ວຍການ ອະນຸມັດ ເປັນແຕ່ລະກໍລະນີ ແລະ ສະເພາະແຕ່ສິນຄ້າປະເພດກະສິກຳເນົ່າເປື່ອຍໄວ). ສະເໜີໃຫ້ມີຄວາມຈະແຈ້ງ ແລະ ແນ່ນອນໃນການຈັດຕັ້ງປະຕິບັດ ແລະ ສ້າງຄວາມສະດວກ ທີ່ຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນກັບທຸກຫົວໜ່ວຍທຸລະກິດທີ່ສົ່ງອອກ. | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ14 ຄັ້ງວັນທີ 21 ມີນາ 2023:<br>▪ ຄຳເຫັນຈາກກົມຂົນສົ່ງ: ສຳລັບແຈ້ງການ ເລກທີ 04718/ຍທຂ.ທກ, ລົງວັນທີ 23 ກຸມພາ 2022 ແມ່ນ ອີງໃສ່ກອບສັນຍາການຂົນສົ່ງລະຫວ່າງສອງຝ່າຍ (ລາວ-ຈີນ, ລາວ-ຫວຽດນາມ, ລາວ-ໄທ, ລາວ-ກຳປູເຈຍ), ແຈ້ງການເລກທີ 63/ຫສນຍ ແລະ ຂໍ້ກຳນົດໃນໄລຍະການແຜ່ລະບາດຂອງໂຄວິດ 19 ທີ່ກຳນົດວ່າລົດຂົນສົ່ງສິນຄ້າທີ່ມາຈາກຕ່າງປະເທດຕ້ອງໄດ້ມີການຄ່ຽນຖ່າຍ, ຈຸດປະສົງຂອງແຈ້ງການເລກທີ 04718/ຍທຂ.ທກ, ລົງວັນທີ 23 ກຸມພາ 2022 ແມ່ນເພື່ອບໍ່ໃຫ້ລົດຕ່າງປະເທດເຂົ້າມາຮັບ ແລະ ຂົນສົ່ງສິນຄ້າຊະຊາຍຢູ່ອານາເຂດ ສປປ ລາວ ທີ່ອາດບໍ່ສາມາດຄວບຄຸມໄດ້-ເຮັດໃຫ້ຫົນທາງເສຍຫາຍ ແລະ ເພື່ອບໍ່ໃຫ້ລົດຂົນສົ່ງຕ່າງປະເທດເຂົ້າມາຍາດແຍ່ງວຽກເຮັດງານທຳຂອງຜູ້ປະກອບການຂົນສົ່ງລາວ. ສະນັ້ນ ໃນໄລຍະຂ້າມຜ່ານນີ້ ສຳລັບຂໍ້ສະເໜີ ຂໍອະນຸຍາດນຳລົດຂົນສົ່ງເປົ່າ ແລະ ຕູ້ສິນຄ້າເປົ່າຈາກຕ່າງປະເທດເຂົ້າມາຮັບສິນຄ້າຢູ່ ສປປ ລາວ, ການແກ້ໄຂໄລຍະສັ້ນເບື້ອງຕົ້ນ ແມ່ນຈະແກ້ໄຂເປັນແຕ່ລະກໍລະນີສຳລັບສິນຄ້າກະສິກຳບູດເນົ່າໄວ, ແລະ ສິນຄ້າທາດແຫຼວໄວໄຟອັນຕະລາຍ ທີ່ລົດຂົນສົ່ງລາວຍັງບໍ່ສາມາດໃຫ້ບໍລິການຂົນສົ່ງໄດ້ ຫຼື ການຂົນສົ່ງເກີດຂຶ້ນໃນເຂດທີ່ລົດຂົນສົ່ງລາວບໍ່ສາມາດເຂົ້າເຖິງໄດ້. ສຳລັບສິນຄ້າກະສິກຳບູດເນົ່າໄວ ແມ່ນໃຫ້ເອົາ ຕາມບັນຊີບູລິມະສິດ ຂອງກະຊວງ ອຄ, ເຊິ່ງການຂໍອະນຸຍາດຕ້ອງຜ່ານການຢັ້ງຢືນຄວາມຈຳເປັນແຕ່ລະຄັ້ງ ຈາກພະແນກ ຍທຂ ແຂວງ ແລະ ສະມາຄົມຜູ້ຂົນສົ່ງສິນຄ້າຂອງແຂວງ. ກົມຂົນສົ່ງຈະພິຈາລະນາອະນຸມັດດ້ານນະໂຍບາຍລົດຂົນສົ່ງເປົ່າ ແລະ ຕູ້ເປົ່າ ເຂົ້າມາຮັບສິນຄ້າເປັນແຕ່ລະກໍລະນີຕາມຈຳນວນ ແລະ ໄລຍະເວລາທີ່ເໝາະສົມ ຈາກນັ້ນມອບໃຫ້ ພະແນກ ຍທຂ ແຂວງ/ນະຄອນຫຼວງ ເປັນຜູ້ຮັບຜິດຊອບຕິດຕາມ ແລະ ກວດກາ ການນຳເຂົ້າຂອງລົດເປົ່າ ແລະ ຕູ້ສິນຄ້າເປົ່າໃນແຕ່ລະຄັ້ງ.<br>▪ ກະຊວງໂຍທາທິການ ແລະ ຂົນສົ່ງ ຈະໄດ້ມີການສົມທົບກັບສະມາຄົມ LITFA ເພີ່ມເຕີມສຳຫຼັບການຂະຫຍາຍກອບລາຍການສິນຄ້າທີ່ສາມາດໃຫ້ລົດຕ່າງປະເທດ ຫຼື ຕູ້ເປົ່າຈາກຕ່າງປະເທດເຂົ້າມາຮັບເອົາສິນຄ້າຢູ່ ສປປ ລາວທີ່ຈຸດສົ່ງ-ມອບສິນຄ້າ ໄດ້ ໂດຍທີ່ບໍ່ຕ້ອງມີການຄ່ຽນຖ່າຍ, ສັບປ່ຽນຫົວລາກເປັນລົດລາວ, ແລະ ຈະມີການອອກແຈ້ງການຈັດຕັ້ງປະຕິບັດ. ສຳລັບການແກ້ໄຂໄລຍະຍາວ ກະຊວງໂຍທາທິການ ແລະ ຂົນສົ່ງ ຈະມີການເຈລະຈາສັນຍາຂົນສົ່ງສອງຝ່າຍເພີ່ມເຕີມ ໂດຍສະເພາະ ແມ່ນສັນຍາຂົນສົ່ງ ລາວ-ໄທ, ເນື່ອງຈາກສັນ ຍາໄດ້ມີການເຊັນມາຫຼາຍປີຜ່ານມາ ແລະ ບໍ່ແທດເໝາະກັບສະພາບປະຈຸບັນ.<br>▪ ຄຳເຫັນຈາກ ກົມການນຳເຂົ້າ ແລະ ສົ່ງອອກ: ກະຊວງ ອຸດສາຫະກຳ ແລະ ການຄ້າ ໄດ້ຮວບຮວມລາຍການສິນຄ້າກະສິກຳທີ່ເປັນບູລິມະສິດສຳລັບການສົ່ງອອກ ທີ່ຕ້ອງການເອົາລົດເປົ່າເຂົ້າມາຂົນເພື່ອສົ່ງອອກ (ເອກະສານ ສະບັບເລກທີ 027/ກຂອ.ອນຄ, ລົງວັນທີ 06 ມັງກອນ 2023 ແລະ ສົ່ງໃຫ້ກັບກະຊວງ ຍທຂ ເພື່ອຄົ້ນຄວ້າອອກແຈ້ງການໃຫ້ແຂວງຈັດຕັ້ງໃນຂອບເຂດທົ່ວປະເທດ. |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 4 | ກະຊວງພາຍໃນ | • ສະເໜີ ພິຈາລະນາປັບ ດຳລັດວ່າດ້ວຍສະມາຄົມເລກທີ 238/ລບ, ລົງວັນທີ 11/08/2017, ໂດຍລະບຸແຍກຊັດເຈນຕໍ່ກັບ ການຄຸ້ມຄອງສະມາຄົມປະເພດ ສະມາຄົມທຸລະກິດ ແມ່ນ ໃຫ້ຂຶ້ນກັບ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ອີງຕາມ ດຳລັດ 237/ນຍ ທີ່ ກຳນົດໃຫ້ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນໜ່ວຍງານ ຄົ້ນຄວ້າ ປະກອບຄຳເຫັນຕໍ່ການສະເໜີສ້າງຕັ້ງສະມາຄົມທຸລະກິດ ທັງພາຍໃນ ແລະ ຕ່າງປະເທດທີ່ສະເໜີສ້າງຕັ້ງຂຶ້ນຢູ່ ສປປ ລາວ ເພື່ອສະເໜີໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ພິຈາລະນາອະນຸມັດ, ແລະ ພາຍຫຼັງ ສະມາຄົມ/ກຸ່ມ ທຸລະກິດ ໄດ້ຮັບການສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍແລ້ວ ແມ່ນໃຫ້ຢູ່ພາຍໃຕ້ການຄຸ້ມຄອງຂອງສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ).<br>• ສະເໜີເພີ່ມເຕີມໃຫ້ ກະຊວງພາຍໃນ ແລະ ກະຊວງ ອຸດສາຫະກຳ ແລະ ການຄ້າ ພິຈາລະນາກຳນົດເວລາຊັດເຈນໃນການສ້າງນິຕິກຳສະເພາະຂອງການສ້າງຕັ້ງຄຸ້ມຄອງ ແລະ ເຄື່ອນໄຫວຂອງອົງການຈັດຕັ້ງຂອງພາກທຸລະກິດ ເຊັ່ນ, ສະພາການຄ້າ, ສະມາຄົມ ແລະ ກຸ່ມທຸລະກິດ, ແລະ ປັບ/ຕື່ມ ບາງມາດຕາໃນດຳລັດ 238/ລບ ເພື່ອໃຫ້ມີຄວາມຊັດເຈນ ສຳລັບການຈັດຕັ້ງປະຕິບັດ. | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023:<br>ຄຳເຫັນຈາກກະຊວງພາຍໃນ:<br>• ສຳລັບການຄຸ້ມຄອງ ແລະ ສ້າງຕັ້ງສະມາຄົມ ແມ່ນບົດບາດຂອງກະຊວງພາຍໃນ, ສ່ວນ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ແມ່ນອົງການຈັດຕັ້ງສັງຄົມຂອງພາກທຸລະກິດ ເຊິ່ງບໍ່ແມ່ນອົງການຄຸ້ມຄອງລັດ ຈຶ່ງບໍ່ເໝາະສົມໃນການເຮັດໜ້າທີ່ຄຸ້ມຄອງລັດ, ເຊິ່ງຂັ້ນຕອນ ແລະ ໜ້າທີ່ດັ່ງກ່າວນັ້ນ ຂຶ້ນກັບກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ພິຈາລະນາຕົກລົງ. ສ່ວນ ສຄອຊ ມີໜ້າທີ່ໃນການຄົ້ນຄວ້າປະກອບຄຳເຫັນຕໍ່ການສ້າງຕັ້ງສະມາຄົມເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດ ເລກທີ 237/ນຍ.<br>• ສຳລັບຂໍ້ສະເໜີເພີ່ມເຕີມ ໃຫ້ ກະຊວງພາຍໃນ ແລະ ກະຊວງ ອຸດສາຫະກຳ ແລະ ການຄ້າ ພິຈາລະນາກຳນົດເວລາຊັດເຈນໃນການສ້າງນິຕິກຳສະເພາະຂອງການສ້າງຕັ້ງຄຸ້ມຄອງ ແລະ ເຄື່ອນໄຫວຂອງອົງການຈັດຕັ້ງຂອງພາກທຸລະກິດ ເຊັ່ນ, ສະພາການຄ້າ, ສະມາຄົມ ແລະ ກຸ່ມທຸລະກິດ, ແລະ ປັບ/ຕື່ມ ບາງມາດຕາໃນດຳລັດ 238/ລບ ເພື່ອໃຫ້ມີຄວາມຊັດເຈນ: ແມ່ນກະຊວງພາຍໃນ ຈະໄດ້ປຶກສາຫາລື ກັບກະຊວງອຸດສາຫະກຳ ແລະ ການຄ້າ ເພີ່ມເຕີມ ເພື່ອຄົ້ນຄວ້າຂໍ້ສະເໜີດັ່ງກ່າວນີ້ໃຫ້ມີທິດທາງແກ້ໄຂ ໃນປີ 2023 ນີ້. ປະຈຸບັນ ກະຊວງພາຍໃນ ກຳລັງ ປະເມີນ ແລະ ທົບທວນຄືນການຈັດຕັ້ງປະຕິບັດດຳລັດເລກທີ 238/ລບ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍການສ້າງນິຕິກຳ<br>• ຮອງນາຍົກລັດຖະມົນຕີ ຊີ້ນຳ ໃຫ້ຄົ້ນຄວ້າເພື່ອສ້າງກົນໄກໃນການສະໜອງຂໍ້ມູນໃຫ້ກັບສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເພື່ອໃຫ້ສາມາດເກັບກຳຂໍ້ມູນກ່ຽວກັບສະມາຄົມທຸລະກິດໄດ້ |
| 5 | ກະຊວງພາຍໃນ | • ສະເໜີໃຫ້ ກະຊວງພາຍໃນ ພິຈາລະນາ ປັບປຸງ ດຳລັດວ່າດ້ວຍສະມາຄົມເລກທີ 238/ລບ, ລົງວັນທີ 11/08/2017 (ໃນວັກທີ 7 ຂໍ້ທີ 3 ທີ່ລະບຸວ່າ ບໍ່ອະນຸຍາດໃຫ້ຄົນຕ່າງປະເທດ ເປັນຄະນະບໍລິຫານງານຂອງສະມາຄົມທຸລະກິດ ແລະ ບໍ່ອະນຸຍາດໃຫ້ມີສິດອອກສຽງໃນການເລືອກຄະນະບໍລິຫານງານ, ແລະ ມາດຕາທີ 31 ຂໍ້ທີ 7 ກໍ່ລະບຸວ່າບໍ່ອະນຸຍາດໃຫ້ຜູ້ຊ່ຽວຊານຕ່າງປະເທດ ຫຼື ອາສາສະໝັກຄົນຕ່າງປະເທດ ເຮັດວຽກປະຈຳໃນສະມາຄົມໄດ້)ໂດຍ ພິຈາລະນາລະບຸ:<br>- ອະນຸຍາດໃຫ້ຄົນຕ່າງປະເທດເຂົ້າຮ່ວມໃນຄະນະຂັບຂວາຍ, ສາມາດມີສ່ວນ<br>- ຮ່ວມໃນການເປັນຄະນະບໍລິຫານງານຂອງສະມາຄົມທຸລະກິດ ເພື່ອຮັບປະກັນການປະຕິບັດຢ່າງເທົ່າທຽມກັນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍການສົ່ງເສີມການລົງທຶນ<br>- ລຶບລ້າງຂໍ້ຫ້າມບໍ່ໃຫ້ມີຜູ້ຊ່ຽວຊານຕ່າງປະເທດເຮັດວຽກໃຫ້ກັບສະມາຄົມທຸລະກິດແບບຖາວອນ ແລະ ຄວນນຳໃຊ້ກົດໝາຍແຮງງານມາດຕາ 45 ແທນ.<br>• ສະເໜີໃຫ້ກະຊວງການຕ່າງປະເທດ, ກະຊວງພາຍໃນກະຊວງການຄ້າ ແລະ ສຄອຊ ຄົ້ນຄວ້ານິຕິກຳສະເພາະອົງການຈັດຕັ້ງຂອງທຸລະກິດ ເຊັ່ນ ສະພາການຄ້າ ແລະ ສະມາຄົມທຸລະກິດ | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023:<br>ຄຳເຫັນຈາກກະຊວງພາຍໃນ:<br>• ດຳລັດເລກທີ 238/ລບ ເປັນດຳລັດຄຸ້ມຄອງການຈັດຕັ້ງສະມາຄົມຂອງຄົນລາວ ແລະ ເຄື່ອນໄຫວດ້ວຍຄວາມສະໝັກໃຈ ແລະ ບໍ່ຫວັງຜົນກຳໄລ. ສຳລັບສະມາຄົມຂອງຕ່າງປະເທດ ແມ່ນມີດຳລັດເລກທີ 013/ນຍ ວ່າດ້ວຍອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ເຊິ່ງກະຊວງການຕ່າງປະເທດເປັນຜູ້ຄຸ້ມຄອງ.<br>• ຢ່າງໃດກໍ່ຕາມ ເນື່ອງຈາກບັນຫານີ້ ເປັນບັນຫາລະອຽດອ່ອນ ສະນັ້ນ ກະຊວງພາຍໃນຈະສົມທົບກັບກະຊວງການຕ່າງປະເທດ ແລະ ພາກສ່ວນກ່ຽວຂ້ອງ ຄົ້ນຄວ້າບັນຫາດັ່ງກ່າວ ເພື່ອປັບປຸງເຂົ້າໃນດຳລັດ 238/ລບ, ເຊິ່ງປະຈຸບັນ ກະຊວງພາຍໃນ ແມ່ນມີແຜນໃນການປັບປຸງດຳລັດ ແລະ ນິຕິກຳກ່ຽວກັບວຽກງານອົງການຈັດຕັ້ງສັງຄົມໃນໄວໆນີ້ |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 6 | ກະຊວງແຜນການ ແລະ ການລົງທຶນ | ສະເໜີໃຫ້ມີການປັບປຸງກົດໝາຍສົ່ງເສີມການລົງທຶນ ເພື່ອໃຫ້ສາມາດລົບລ້າງບັນຊີກິດຈະການຄວບຄຸມ ແລະ ຂອດການຂໍໃບອະນຸຍາດລົງທຶນ (ທີ່ບໍ່ແມ່ນກິດຈະການສຳປະທານ) ເນື່ອງຈາກຂອດຂັ້ນດັ່ງກ່າວ ບໍ່ໄດ້ສ້າງມູນຄ່າເພີ່ມໃກ້ແກ່ການລົງທຶນ ແລະຍັງຊໍ້າຊ້ອນກັບຂອດການຂໍອະນຸຍາດດຳເນີນທຸລະກິດ. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວຍິນດີ ຄົ້ນຄວ້າເພີ່ມເຕີມຮ່ວມກັບກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ, ໂດຍນຳໃຊ້ທຶນຮອນໂຄງການທີ່ຜ່ານກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຈັດຈ້າງຊ່ຽວຊານສະເພາະ ມາສຶກສາລະອຽດຕໍ່ກັບເຫດຜົນທີ່ຄວນລົບລ້າງຂອດຂັ້ນດັ່ງກ່າວ. | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023:<br><br>• ຄຳເຫັນຂອງ ກະຊວງແຜນການ ແລະການລົງທຶນ: ເຫັນວ່າ ເປັນຂໍ້ສະເໜີທີ່ມີປະໂຫຍດ ແລະຄວນໄດ້ຮັບການຄົ້ນຄວ້າພິຈາລະນາຢ່າງເລິກເຊິ່ງ. ປະຈຸບັນ ກະຊວງແຜນການ ແລະ ການລົງທຶນ ພວມຢູ່ໃນຂະບວນການດຳເນີນການຄົ້ນຄວ້າປັບປຸງ ກົດໝາຍສົ່ງເສີມການລົງທຶນ ຂອງຄະນະ ເພື່ອສະເໜີສະພາແຫ່ງຊາດຮັບຮອງໃນເດືອນທັນວາ ປີ 2023, ຈິ່ງສະເໜີໃຫ້ພາກທລະກິດຊ່ວຍຄົ້ນຄວ້າຍົກໃຫ້ເຫັນເຖິງເຫດຜົນຢ່າງລະອຽດ ແລະ ຮອບດ້ານ ທີ່ເຫັນຄວນໃຫ້ລົບລ້າງບັນຊີຄວບຄຸມ ເພື່ອນຳໄປ ປຶກສາຫາລືຄົ້ນຄວ້າສົມທົບກັບຂະແໜງການກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການ. ຜ່ານມາ ແລະ ໃນປະຈຸບັນ ກະຊວງແຜນການ ແລະ ການລົງທຶນ ກໍ່ໄດ້ເຮັດວຽກຮ່ວມກັບຂະແໜງການກ່ຽວຂ້ອງ ເພື່ອຄົ້ນຄວ້າຫຼຸດຜ່ອນລາຍການໃນບັນຊີກິດຈະການຄວບຄຸມລົງຕື່ມ.<br><br>• ຄຳເຫັນຂອງ ທ່ານຮອງນາຍົກລັດຖະມົນຕີຜູ້ຊີ້ນຳ: ໃຫ້ສືບຕໍ່ຄົ້ນຄວ້າປັບປຸງເພື່ອຫຼຸດຂັ້ນຕອນການອະນຸມັດລົງທຶນໂດຍລວມໃຫ້ສະດວກຂຶ້ນ (ລວມທັງບັນຊີກິດຈະການຄວບຄຸມ) |
| 7 | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ສະເໜີໃຫ້ສຳເລັດ ການສ້າງຕັ້ງສະພາສົ່ງເສີມການທ່ອງທ່ຽວ ໂດຍໄວ ເພື່ອໃຫ້ສະພາດັ່ງກ່າວສາມາດເຄື່ອນໄຫວ ເພື່ອນຳພາດ້ານການຕະຫຼາດ, ການໂຄສະນາ ແລະ ການສົ່ງເສີມດ້ານການກິດຈະກຳຕ່າງໆທີ່ປົ່ນອ້ອມການທ່ອງທ່ຽວ. ພ້ອມກັນນີ້ ກໍ່ສະເໜີໃຫ້ມີການມີການຈັດສັນງົບປະມານ ທີ່ພຽງພໍ ເພື່ອຂັບເຄື່ອນກິດຈະກຳຂອງສະພາສົ່ງເສີມການທ່ອງທ່ຽວ, ເຊິ່ງງົບປະມານດັ່ງກ່າວ ຄວນມາຈາກກອງທຶນສົ່ງເສີມການທ່ອງທ່ຽວ. | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023: ກະຊວງ ຖວທ ໄດ້ສົມທົບກັບ ສຄອຊ ເພື່ອຮ່າງດຳລັດວ່າດ້ວຍສະພາສົ່ງເສີມການຕະຫຼາດການທ່ອງທ່ຽວ, ປະຈຸບັນ ຮ່າງດຳລັດ ແມ່ນກຳລັງຖືກສະເໜີຕໍ່ຄະນະປະຈຳພັກກະຊວງຄົ້ນຄວ້າພິຈາລະນາ ເພື່ອນຳສົ່ງກະຊວງ ຍຸຕິທຳຄົ້ນຄວ້າພິຈາລະນາຕາມຂັ້ນຕອນຂອງກົດໝາຍ |
| 8 | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ສະເໜີໃຫ້ມີການປະເມີນຄືນປະສິດຕິຜົນ ໃນການຈັດຕັ້ງປະຕິບັດນິຕິກຳທີ່ຕິດພັນກັບການເກັບກອງທຶນ ສົ່ງເສີມການທ່ອງທ່ຽວ (ດຳລັດ ວ່າດ້ວຍກອງທຶນການທ່ອງທ່ຽວ ເລກທີ 119/ລບ ລົງວັນທີ 10 ເມສາ 2017). ຖ້າເຫັນວ່າ ນິຕິກຳທີ່ມີຢູ່ບໍ່ມີປະສິດຕິຜົນພຽງພໍໃນການຈັດເກັບກອງທຶນສົ່ງເສີມການທ່ອງທ່ຽວ, ກໍ່ສະເໜີໃຫ້ມີການປັບປຸງ. ໃນການຈັດຕັ້ງປະຕິບັດການຈັດເກັບ ກໍ່ຄວນໃຫ້ເປັນເອກະພາບທົ່ວປະເທດ ແລະ ໃຫ້ມີຊ່ອງທາງການຈ່າຍ ທີ່ສະດວກສະບາຍເພື່ອ ຮັບປະກັນໃຫ້ລາຍຮັບໄດ້ຕາມເປົ້າໝາຍ ແລະ ກົງກັບຈຳນວນນັກທ່ອງທ່ຽວທີ່ເຂົ້າມາ. | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023:<br><br>• ກະຊວງ ຖວທ ກຳລັງ ສົມທົບກັບກະຊວງການເງິນ ເພື່ອຫັນການເກັບກອງທຶນຜ່ານລະບົບທັນສະໄໝຢູ່ດ່ານສາກົນ ຕາມທິດຂອງລັດຖະບານ<br>• ກະຊວງ ຖວທ ກຳລັງມີການປັບປຸງດຳລັດວ່າດ້ວຍກອງທຶນການທ່ອງທ່ຽວ |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 9 | ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ | ສະເໜີໃຫ້ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການປະສານກັບຂະແໜງການທີ່ກ່ຽວຂ້ອງ ເພື່ອ ພິຈາລະນາ ປັບປຸງ ຫຼື ອອກນິຕິກຳ ສະເພາະ ເພື່ອເອື້ອອຳນວຍໃຫ້ແກ່ການທ່ອງທ່ຽວທີ່ອີງໃສ່ທຳມະຊາດ, ແລະ ການທ່ອງທ່ຽວທີ່ອີງໃສ່ ຊຸມຊົນ ແນໃສ່ ຫຼຸດຜ່ອນຂອດຂັ້ນການອະນຸຍາດສຳປະທານ, ແລະ ຄ່າທຳນຽມທີ່ຕິດພັນກັບການສຳປະທານທີ່ດິນ ສຳລັບການພັດທະນາການທ່ອງທ່ຽວທີ່ອີງໃສ່ທຳມະຊາດ. | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023:<br>• ກ່ຽວກັບການອະນຸຍາດສຳປະທານແຫຼ່ງທ່ອງທ່ຽວ ແມ່ນປະຕິບັດຕາມຂັ້ນຕອນການລົງທຶນ ລະບົບປະຕູດຽວຂອງລັດຖະບານ<br>• ກ່ຽວກັບອັດຕາຄ່າທຳນຽມ ແລະ ຄ່າບໍລິການ ສຳປະທານ ແຫຼ່ງທ່ອງທ່ຽວ ຫຼື ກິດຈະການແຫຼ່ງທ່ອງທ່ຽວປະຈຸບັນ ກະຊວງ ຖວທ ໄດ້ສະເໜີປັບຫຼຸດອັດຕາສຳປະທານກ່ຽວກັບກິດຈະການດັ່ງກ່າວ ຕໍ່ກະຊວງການເງິນ ເພື່ອພິຈາລະນາ<br>• ເນື່ອງຈາກ ກິດຈະການດັ່ງກ່າວ ຕິດພັນກັບການສຳປະທານ, ແລະ ຜ່ານມາ ຍັງບໍ່ທັນໄດ້ມີການແຍກລະອຽດລະຫວ່າງການສຳປະທານທີ່ດິນໃນຮູບແບບອະນຸລັກ ອອກຈາກການສຳປະທານຂຸດຄົ້ນ ສະນັ້ນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນເປັນໃຈກາງປະສານງານຕໍ່ກັບບັນຫານີ້<br>• ຄຳເຫັນຂອງ ທ່ານຮອງນາຍົກລັດຖະມົນຕີຜູ້ຊີ້ນຳ:ໃຫ້ສືບຕໍ່ປຶກສາຫາລື ບັນຫານີ້ ລະຫວ່າງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ. |
| 10 | ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ | ສະເໜີໃຫ້ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນໃຈກາງປະສານງານກັບຂະແໜງການສຶກສາທິການ ແລະ ກິລາ ເພື່ອ ອອກຄຳແນະນຳລະອຽດກ່ຽວກັບການຈັດກິດຈະກຳກິລາເພື່ອການທ່ອງທ່ຽວ ໂດຍສະເພາະ ແມ່ນ ໃຫ້ລະບຸຂັ້ນຕອນ, ຄ່າທຳນຽມ ແລະ ຄ່າບໍລິການ ແລະ ຈຳນວນເຈົ້າໜ້າທີ່ຮັກສາຄວາມປອດໄພ (ແລະ ຄ່າໃຊ້ຈ່າຍທີ່ຕິດພັນ) ໃນກິດຈະກຳກິລາ ແຕ່ລະຂະໜາດ ແລະ ປະເພດ ແລະໃຫ້ມີການຈັດຕັ້ງເປັນເອກະພາບກັນໃນທົ່ວທຸກແຂວງ. | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023:<br>• ຜ່ານມາ ກະຊວງ ຖວທ ໄດ້ປຶກສາຫາລືກ່ຽວກັບບັນຫານີ້ ກັບ ກະຊວງສຶກສາທິການ ແລະ ກິລາ ແຕ່ຍັງບໍ່ທັນໄດ້ມີການຄົ້ນຄວ້າຢ່າງລະອຽດເທື່ອ<br>• ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະເໜີໃຫ້ພາກທຸລະກິດ ສະເໜີບັນຫານີ້ຫາກະຊວງສຶກສາທິການ ແລະ ກິລາ ໂດຍກົງຕື່ມ |
| 11 | ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ | ສະເໜີໃຫ້ມີການບໍລິການລະບົບອອນໄລນ໌ ໃນການກວດກາຄວາມຖືກຕ້ອງຂອງໃບຕາດິນ, ຂໍ້ຂັດແຍ່ງຕ່າງໆທາງທີ່ດິນ, ແລະ ໂຄງການລັດຖະບານຕ່າງໆທີ່ດິນຕັ້ງຢູ່ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຈົດທະບຽນສັນຍາເງິນກູ້ ແລະ ຫຼັກຊັບຄ້ຳປະກັນ | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023: ກົມທີ່ດິນ ໄດ້ພັດທະນາປັບປຸງໂປຣແກມທະບຽນທີ່ດິນ (Lao Land Reg Version 7) ເຊິ່ງສາມາດຮັບໃຊ້ວຽກງານ: 1. ການຂຶ້ນທະບຽນອອກໃບຕາດິນ; 2.ການຈົດທະບຽນປ່ຽນແປງສິດນຳໃຊ້ທີ່ດິນ (ມອບໂອນ, ແບ່ງແຍກ, ລວມຕອນດິນ); 3.ການຈົດທະບຽນເຄື່ອນໄຫວ (ຢັ້ງຢືນຄວາມຖືກຕ້ອງ, ຈຳນອງ, ຂັດຄ້ານ); 4.ຕິດຕາມເອກະສານຂາເຂົ້າ-ຂາອອກ (ການຕິດຕາມຄຳຮ້ອງ); ແລະ 5.ການຄິດໄລ່ຄ່າທຳນຽມຕ່າງໆ. ໃນກາງປີ 2023 ລະບົບຈະສາມາດໃຫ້ບໍລິການໄດ້ບາງສ່ວນ ແລະ ໃນຕົ້ນປີ 2024 ລະບົບຈະສາມາດນຳໃຊ້ໄດ້ເຕັມຮູບແບບ. ຢ່າງໃດກໍ່ຕາມ ສຳລັບຄວາມຄົບຖ້ວນຂອງຂໍ້ມູນທີ່ດິນ ແມ່ນຈະສືບຕໍ່ເອົາເຂົ້າໃນລະບົບ ເຊິ່ງຕ້ອງໄດ້ໃຊ້ເວລາ. |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 12 | ທະນາຄານ ແຫ່ງ ສປປ ລາວ | ຕໍ່ກັບວົງເງິນກູ້ຈຳນວນໜ້ອຍ ສະເໜີອະນຸຍາດໃຫ້ສາມາດນຳໃຊ້ໃບຢັ້ງຢືນສິດນຳໃຊ້ທີ່ດິນ ທີ່ຮັບຮອງໂດຍນາຍບ້ານ ເປັນຫຼັກຊັບຄ້ຳປະກັນໃນເຂດທີ່ບໍ່ມີການເຮັດໃບຕາດິນ ຂອບທອງ (ແລ້ວລາຍງານເຂົ້າໃນລະບົບຂໍ້ມູນສິນເຊື່ອໄດ້)<br><br>ສະເໜີເພີ່ມເຕີມໃຫ້ ທະນາຄານ ແຫ່ງ ສປປ ລາວ ໃນນາມເປັນໜ່ວຍງານມະຫາພາກຜູ້ຄຸ້ມຄອງ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງເງິນກູ້ຢືມທະນາຄານ- ພິຈາລະນາສຶກສາຄວາມເປັນໄປໄດ້ກ່ຽວກັບການສະເໜີປັບປຸງ ກົດໝາຍທີ່ດິນ ມາດຕາ 104 ວັກທີ 2, ເນື່ອງຈາກ ຕໍ່ກັບວົງເງິນກູ້ຈຳນວນໜ້ອຍ ຖ້າສາມາດອະນຸຍາດໃຫ້ນຳໃຊ້ໃບຢັ້ງຢືນສິດນຳໃຊ້ທີ່ດິນ ທີ່ຮັບຮອງໂດຍນາຍບ້ານ ເປັນຫຼັກຊັບຄ້ຳປະກັນໃນເຂດທີ່ບໍ່ມີການເຮັດໃບຕາດິນຂອບທອງ ຈະສາມາດຫຼຸດຜ່ອນອຸປະສັກ ແລະ ຄ່າໃຊ້ຈ່າຍ ໃນການເຂົ້າເຖິງເງິນກູ້ຢືມທະນາຄານ ຂອງບັນດາຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ, ທັງນີ້ກໍ່ເພື່ອເປັນການຫຼຸດຜ່ອນການຫັນໄປນຳໃຊ້ການບໍລິການ ຂອງສະຖາບັນການເງິນນອກລະບົບ ໂດຍບັນດາຈຸນລະວິສາຫະກິດ ແລະ ວິສາຫະກິດ ຂະໜາດນ້ອຍດັ່ງກ່າວ | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023: ຄຳເຫັນຈາກ ທະນາຄານ ແຫ່ງ ສປປ ລາວ:<br>• ປະຈຸບັນກົດໝາຍທີ່ດິນ ມາດຕາ 104 ວັກທີ 2 ໄດ້ກຳນົດວ່າ ການຈົດທະບຽນສິດນຳໃຊ້ທີ່ດິນ ແມ່ນໃຫ້ດຳເນີນຢູ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ບ່ອນທີ່ດິນຕັ້ງຢູ່ ໂດຍຊ້ອງໜ້າກັນລະຫວ່າງຄູ່ສັນຍາ ກັບເຈົ້າໜ້າທີ່ທີ່ດິນ ໝາຍຄວາມວ່າ ໃບຢັ້ງຢືນສິດນຳໃຊ້ທີ່ດິນ ທີ່ຈະນຳໄປເປັນຫຼັກຊັບຄ້ຳປະກັນການກູ້ຢືມນັ້ນ ຕ້ອງໄດ້ຮັບການຮັບຮອງຈາກຂະແໜງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ. ທັງນີ້ ໃນໄລຍະປີ 2020, ທະນາຄານ ແຫ່ງ ສປປ ລາວ ກໍໄດ້ອອກແຈ້ງການກ່ຽວກັບການເພີ່ມທະວີການເອົາໃຈໃສ່ໃນການຈັດຕັ້ງປະຕິບັດປະມວນກົດໝາຍແພ່ງ ແລະ ກົດໝາຍວ່າດ້ວຍທີ່ດິນສະບັບເລກທີ 506/ກຄທ, ລົງວັນທີ 27 ສິງຫາ 2020 ເພື່ອໃຫ້ບັນດາທຸລະກິດ ແລະ ສາຂາທະນາຄານທຸລະກິດປະຕິບັດຢ່າງເຂັ້ມງວດ.<br><br>• ສຳລັບໄລຍະຂ້າມຜ່ານນີ້ ກໍ່ຄື ແຕ່ນີ້ຮອດ 3 ປີຕໍ່ໜ້າ, ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັງປະຕິບັດ, ທະນາຄານ ແຫ່ງ ສປປ ລາວ ພວມຮ່າງຂໍ້ຕົກລົງຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ເພື່ອເປັນເອກະສານແນະນຳໃຫ້ແກ່ທະນາຄານທຸລະກິດ ຢ່າງລະອຽດ ແລະ ຈະແຈ້ງ ກ່ຽວກັບເອກະສານທີ່ສາມາດນຳໃຊ້ເປັນຫຼັກຊັບຄ້ຳປະກັນເງິນກູ້ໄດ້ ສຳລັບແຕ່ລະຂັ້ນວົງເງິນກູ້. ທະນາຄານ ແຫ່ງ ສປປ ລາວ ຈະໄດ້ສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບລາຍລະອຽດຂໍ້ຕົກລົງແນະນຳດັ່ງກ່າວ ບົນພື້ນຖານເພື່ອອຳນວຍຄວາມສະດວກໃຫ້ຜູ້ກູ້ຢືມທີ່ຍັງບໍ່ໄດ້ຂຶ້ນທະບຽນໃບຕາດິນເປັນຂອບທອງ ສາມາດເຂົ້າເຖິງເງິນກູ້ຢືມໄດ້, ຈົນກວ່າທີ່ຂະແໜງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະສາມາດອອກໃບຕາດິນຂອບທອງໄດ້ສຳເລັດທົ່ວປະເທດ ແລະ ສາມາດປະຕິບັດກົດໝາຍວ່າດ້ວຍທີ່ດິນໄດ້ຢ່າງສົມບູນ. ຄາດໝາຍການອອກບົດແນະນຳ ແມ່ນພາຍໃນ 3 ເດືອນນີ້ ແລະ ຈະສະເໜີໃຫ້ສະພາແຫ່ງຊາດຮັບຮູ້. |
| 13 | ທະນາຄານ ແຫ່ງ ສປປ ລາວ | ສະເໜີໃຫ້ມີການຍົກລະດັບສູນຂໍ້ມູນສິນເຊື່ອເພື່ອຂະຫຍາຍການຄອບຄຸມຂໍ້ມູນໃຫ້ທົ່ວເຖິງ ເຊື່ອມໂຍງຂໍ້ມູນກັບບັນດາຜູ້ໃຫ້ບໍລິການດ້ານສາທາລະນຸປະໂພກຕ່າງໆ | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023: ຄຳເຫັນຈາກ ທະນາຄານ ແຫ່ງ ສປປ ລາວ: ສູນຂໍ້ມູນຂ່າວສານສິນເຊື່ອໄດ້ເຊື່ອມຈອດກັບບັນດາຜູ້ໃຫ້ບໍລິການດ້ານສາທາລະນຸປະໂພກຕ່າງໆ ໃນປີ 2022 ແລະ ໄດ້ສຳເລັດການອອກຜະລິດຕະພັນການຈັດລຳດັບສິນເຊື່ອຂອງບຸກຄົນໄດ້ແລ້ວ ໂດຍອີງໃສ່ຂໍ້ມູນການຊຳລະຄ່າບໍລິການດ້ານສາທາລະນຸປະໂພກຕ່າງໆ (ໂທລະສັບ ແລະ ໄຟຟ້າ). ຢ່າງໃດກໍ່ຕາມ ຂໍ້ມູນຍັງບໍ່ສາມາດສັງລວມໄດ້ໃນຂອບເຂດທົ່ວປະເທດເທື່ອ (ປະຈຸບັນຄອບຄຸມໄດ້ໃນຂອບເຂດ 4 ແຂວງ ລວມທັງນະຄອນຫຼວງວຽງຈັນ) ແລະ ຈະສືບຕໍ່ຮວບຮວມຂໍ້ມູນຂອງແຂວງອື່ນໆເຂົ້າໃນລະບົບ |
| 14 | ທະນາຄານ ແຫ່ງ ສປປ ລາວ | ສະເໜີ ຍົກລະດັບສູນຂໍ້ມູນສິນເຊື່ອເພື່ອຂະຫຍາຍການຄອບຄຸມ ຂໍ້ມູນໃຫ້ທົ່ວເຖິງ ແລະ ການເຊື່ອມໂຍງຂໍ້ມູນກັບບັນດາຂະແໜງການທີ່ກ່ຽວຂ້ອງ;<br><br>ສະເໜີໃຫ້ມີການກຳນົດໄລຍະເວລາສຳເລັດ ໃນແຕ່ລະຂັ້ນ | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023:<br>ຄຳເຫັນຈາກ ທະນາຄານ ແຫ່ງ ສປປ ລາວ:<br><br>• ທຫລ ໄດ້ສະເໜີຫາຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍການສະໜອງຂໍ້ມູນທີ່ຕິດພັນ, ເຊິ່ງໄດ້ມີຄວາມຄືບໜ້າຫຼາຍດ້ານຄື: ສຳເລັດການເຮັດບົດບັນທຶກຄວາມເຂົ້າໃຈກັບກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແລະ ສຳເລັດການເຮັດວຽກໃນຂັ້ນວິຊາການ ຮ່ວມກັບກົມສ່ວຍສາອາກອນ<br><br>• ພາຍໃນປີ 2023 ນີ້ ຈະມີການປັບປຸງໂຄງສ້າງຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອ ໃຫ້ກາຍເປັນບໍລິສັດຫຸ້ນສ່ວນ ໂດຍໃຫ້ສະມາຊິກມາເປັນຫຸ້ນສ່ວນ, ເພື່ອລະດົມທຶນມາປັບປຸງຊອບແວຣ໌ ລະບົບຂໍ້ມູນຂ່າວສານສິນເຊື່ອ ໃຫ້ສຳເລັດ.<br><br>• ພາຍໃນປີ 2026 ຈະໃຫ້ສາມາດອອກຜະລິດຕະພັນ Credit Rating ສຳລັບວິສາຫະກິດໄດ້. |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 15 | ກະຊວງຍຸຕິທໍາ | • ສະເໜີຕັດຂັ້ນຕອນການຈົດທະບຽນສານ ຕໍ່ກັບເອກະສານທີ່ຕິດພັນກັບເງິນກູ້ ຫຼື ໃຫ້ສາມາດປະຕິບັດຜ່ານລະບົບອອນໄລນ໌ໄດ້.<br>• ສໍາລັບການເກັບຄ່າທໍານຽມຈົດທະບຽນສານ ຄວນຄິດໄລ່ເປັນອັດຕາແບບຄົງທີ່ ຫຼື ໃຫ້ມີເພດານຕໍ່ກັບຊຸດເອກະສານໃດໜຶ່ງ ໂດຍບໍ່ໃຫ້ຄິດໄລ່ເປັນໜ້າເຈ້ຍ ຫລື ຈໍານວນ ເງິນທີ່ສະເໜີກູ້. | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023: ຄໍາເຫັນຈາກກະຊວງຍຸຕິທໍາ:<br>• ຂະແໜງການກ່ຽວຂ້ອງແຈ້ງວ່າ ບໍ່ສາມາດຕັດຂັ້ນຕອນດັ່ງກ່າວໄດ້ ເນື່ອງຈາກ ປະຕິບັດຕາມກົດໝາຍວ່າດ້ວຍທະບຽນສານ<br>• ສໍາລັບຂໍ້ສະເໜີໃຫ້ສາມາດຈັດຕັ້ງປະຕິບັດການຈົດທະບຽນສານໃນຂອບເຂດທົ່ວປະເທດຜ່ານລະບົບອອນລາຍ ແມ່ນພວມດໍາເນີນການຢູ່ກັບບໍລິສັດຜູ້ພັດທະນາລະບົບ ແຕ່ຍັງບໍ່ມີຄວາມຄືບໜ້າຫຼາຍ.<br>• ຂະແໜງການ ຢັ້ງຢືນວ່າ ຄ່າທໍານຽມທີ່ເກັບ ແມ່ນ 25,000 ກີບ/ຊຸດ ແລະ ຄ່າບໍລິການ ແມ່ນ 5000 ກີບ/ໜ້າເຈ້ຍ ແລະ ບໍ່ໄດ້ເກັບຕາມຈໍານວນເງິນສະເໜີກູ້ |
| 16 | ກະຊວງຍຸຕິທໍາ | ສະເໜີໃຫ້ສຶກສາຄືນ ກອບຂອງກົດລະບຽບ ແລະ ກົດໝາຍ ທີ່ຕິດພັນກັບການພິຈາລະນາຄະດີແພ່ງ ແລະ ການບັງຄັບໃຊ້ສັນຍາ ເພື່ອ ເຮັດໃຫ້ຂັ້ນຕອນການຕັດສິນຄະດີເງິນກູ້ ແລະ ການຈັດຕັ້ງປະຕິບັດຄໍາຕັດສິນສານໃຫ້ວ່ອງໄວຂຶ້ນ<br>• ເນື່ອງຈາກພາກທຸລະກິດເຫັນວ່າຂັ້ນຕອນການຕັດສິນຂອງສານກໍ່ຍັງມີຄວາມຊັກຊ້າຫຼາຍ ສະນັ້ນ ສະເໜີໃຫ້ກະຊວງຍຸຕິທໍາສຶກສາຄືນ<br>• ກົດໝາຍວ່າດ້ວຍການປະຕິບັດຄໍາຕັດສິນຂອງສານ ສະບັບປັບປຸງ ປີ 2021 ແມ່ນມີຜົນບັງຄັບໃຊ້, ແຕ່ຍັງບໍ່ມີຄໍາແນະນໍາຈັດຕັ້ງປະຕິບັດ | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023, ກະຊວງຍຸຕິທໍາ:<br>• ໄດ້ປັບປຸງກົດໝາຍວ່າດ້ວຍການປະຕິບັດຄໍາຕັດສິນຂອງສານ ເຊິ່ງກົດໝາຍສະບັບປັບປຸງ ປີ 2021 ແມ່ນມີຜົນບັງຄັບໃຊ້<br>• ໄດ້ປັບປຸງຂັ້ນຕອນການຟື້ນຟູການລົ້ມລະລາຍໄດ້ສໍາເລັດ<br>• ໃນການບັງຄັບໃຊ້ສັນຍາ ກົດໝາຍແລະຂະບວນແພ່ງ ກໍານົດແລ້ວວ່າ ຄູ່ສັນຍາສາມາດບັງຄັບໃຊ້ສັນຍາໄດ້ເລີຍ ໂດຍບໍ່ຈໍາເປັນຕ້ອງຍົກຄະດີຂຶ້ນໄປຂະບວນການສານ |
| 17 | ກະຊວງການເງິນ | ສະເໜີໃຫ້ກົມພາສີ ພິຈາລະນາ ອະນຸຍາດໃຫ້ສາມາດນໍາໃຊ້ ຟອມ D ໃນຮູບແບບອີເລັກໂຕນິກ ໃນການປະກອບເອກະສານແຈ້ງພາສີ ເພື່ອ ຫຼຸດໄລຍະເວລາ ແລະ ຄ່າໃຊ້ຈ່າຍໆໃນການສົ່ງ ຟອມ D ສະບັບຕົ້ນ (ຮູບແບບເຈ້ຍ) ຈາກປະເທດຕົ້ນທາງມາ ສປປ ລາວ, ເນື່ອງຈາກການ ຂົນສົ່ງສິນຄ້າໃນບັນດາປະເທດອາຊຽນ ມີໄລຍະເວລາທີ່ຂ້ອນຂ້າງສັ້ນ ສະນັ້ນ ການຮຽກຮ້ອງເອກະສານຟອມ D ສະບັບຕົ້ນ (ຮູບແບບເຈ້ຍ) ຈະເຮັດໃຫ້ມີການແກ່ຍາວເວລາ ແລະ ເພີ່ມຄ່າໃຊ້ຈ່າຍໃນການ ແຈ້ງເອກະສານພາສີ. | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023: ກົມພາສີ ໄດ້ສໍາເລັດການພັດທະນາ ລະບົບ ອີເລັກໂຕນິກເຊື່ອມໂຍງກັບລະບົບພາສີປະຕູດຽວອາຊຽນ ເພື່ອນໍາໃຊ້ເຂົ້າໃນການແລກປ່ຽນຂໍ້ມູນຟອມ D ແບບ ອີເລັກໂຕນິກ, ສະນັ້ນ ກົມພາສີ ຈະສາມາດກວດກາຟອມ D ແບບອີເລັກໂຕນິກ ນັບແຕ່ງວດທີສອງ ຂອງປີ 2023 ເປັນຕົ້ນໄປ. |
| 18 | ກະຊວງການເງິນ | ສະເໜີໃຫ້ກົມພາສີ ເລັ່ງລັດຂະຫຍາຍຂອບເຂດການນໍາໃຊ້ LNSW ໃນແງ່ປະເພດສິນຄ້າ ແລະ ດ່ານພາສີ | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023: ຮອດປະຈຸບັນ ລະບົບ LNSW ໄດ້ຮັບການຕິດຕັ້ງ ແລະ ນໍາໃຊ້ຢູ່ 9 ດ່ານພາສີສາກົນ, ໄດ້ມີການຈັດເຂົ້າໃນລະບົບຫຼາຍປະເພດສິນຄ້າ ກວມເອົາທີ່ຕິດພັນກັບ ກົມການນໍາເຂົ້າສົ່ງອອກ, ກົມຂົນສົ່ງ ແລະ ກົມອາຫານ ແລະ ຢາ. ສ່ວນແຜນຕໍ່ໄປ ແມ່ນເຊື່ອມຕໍ່ລະບົບກັບກົມປູກຝັງ ແລະ ກົມລ້ຽງສັດ ແລະ ການປະມົງ ເຊິ່ງຈະໃຫ້ສໍາເລັດການເຊື່ອມລະບົບໃນປີ 2023 ນີ້. ກົມພາສີ ໄດ້ກໍານົດແຜນທີ່ຊັດເຈນໃນການຜັນຂະຫຍາຍລະບົບດັ່ງກ່າວ ໃຫ້ກວມເອົາທຸກດ່ານພາສີສາກົນໃນຂອບເຂດທົ່ວປະເທດ (ສໍາລັບ 8 ແຫ່ງທີ່ເຫຼືອ) ໃນປີ 2023 ນີ້. |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 19 | ກະຊວງການເງິນ | ສະເໜີໃຫ້ຂະແໜງການເງິນ ພິຈາລະນາ ເປັນເຈົ້າການ ປະສານສົມທົບກັບພາກສ່ວນຕ່າງໆ ເພື່ອລວມສູນການເກັບຄ່າທໍານຽມທີ່ຕິດພັນກັບການຂົນສົ່ງສິນຄ້າ ແລະ ນໍາໃຊ້ລະບົບທັນສະໄໝ ສໍາລັບການແຈ້ງເອກະສານ ແລະເກັບຄ່າທໍານຽມ ເພື່ອໃຫ້ເກີດປະໂຫຍດສູງສຸດ ສະເໜີໃຫ້ກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ ສືບຕໍ່ຕິດຕາມ | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023: ກະຊວງການເງິນແຈ້ງຕອບ:<br>• ອີງຕາມດໍາລັດວ່າດ້ວຍດ່ານຊາຍແດນ ແລະ ສະໜາມບິນສາກົນ ເລກທີ 558/ ໄດ້ລະບຸໃຫ້ຂະແໜງພາສີ ເປັນຜູ້ຈັດເກັບທຸກຄ່າທໍານຽມ ແລະ ຄ່າບໍລິການຢູ່ດ່ານ<br>• ໃນດ້ານການພັດທະນາລະບົບທັນສະໄໝ, ຂະແໜງການເງິນມີລະບົບທັນສະ ໄໝຮອງຮັບການຈັດເກັບຄ່າທໍານຽມ ແລະ ຄ່າບໍລິການທີ່ຄົບຖ້ວນ, ແຕ່ໃນດ້ານການນໍາໃຊ້ແມ່ນຕິດພັນກັບຫຼາຍຂະແໜງການຢູ່ດ່ານ ເຊັ່ນ ຂະແໜງປ້ອງກັນຄວາມສະຫງົບ, ຂະແໜງກະສິກໍາ, ຂະແໜງການຕ່າງປະເທດ, ແລະ ຫ້ອງການປົກຄອງແຂວງ<br>• ກະຊວງການເງິນຈະສືບຕໍ່ຂົນຂວາຍໃຫ້ທຸກຂະແໜງການທີ່ເກັບຄ່າທໍານຽມ ແລະ ຄ່າບໍລິການຢູ່ດ່ານ ມາຮວມສູນການເກັບຢູ່ລະບົບຂອງກະຊວງການເງິນ. |
| 20 | ກະຊວງເຕັກໂນໂລຢີ ແລະ ການສື່ສານ | ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ສໍາເລັດການອອກນະໂຍບາຍສະເພາະ ໃນການສົ່ງເສີມ Start-up | ອີງຕາມ ຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023: ກະຊວງການເງິນແຈ້ງຕອບ: ຂະແໜງກ່ຽວຂ້ອງພວມຮ່າງ ດໍາລັດວ່າດ້ວຍການສົ່ງເສີມສະຕາດອັບ ເພື່ອຜັນຂະຫຍາຍກົດໝາຍສົ່ງເສີມ MSME (ສະບັບປັບປຸງ), ທີ່ລະບຸເນື້ອໃນລະອຽດ ແລະ ເປັນບ່ອນອີງໃຫ້ແກ່ການສົ່ງເສີມສະຕາດອັບ (ຄາດໝາຍປະກາດນໍາໃຊ້ ໃນປີ 2023) |